rfa | ວິທຍຸເອເຊັຽເສຣີ

# ການກໍ່ສ້າງເຂື່ອນເຊກະໝານ 3

2013.12.24



*ສາຍລຳນ້ຳ ເຊກະໝານ ທີ່ເຄີຍສະອາດ ບໍຣິສຸດ ຊຸບລ້ຽງ ຄົນແລະສັດ ມາແຕ່ ດຶກດຳບັນ*

ການກໍ່ສ້າງເຂື່ອນໄຟຟ້າເຊກະໝານ3 ໃນແຂວງເຊກອງ ຊຶ່ງເລີ້ມ ແຕ່ປີ 2006 ເປັນຕົ້ນມາແລະກຳນົດເປີດໃຊ້ໃນປີ 2012 ແຕ່ມາ ຮອດປັດຈຸບັນກໍຍັງບໍ່ສຳເຣັດເທື່ອ ຍ້ອນທໍ່ສົ່ງນ້ຳໃນເຮືອນຈັກແຕກ ກຳລັງສ້ອມແປງກັນຢູ່ແລະຄາດວ່າຈະເຍີ້ນເວລາ ໄປຕື່ມອີກ:

*"ເຂື່ອນໄຟຟ້າເຊກະໝານ3 ກໍຍັງມີບັນຫາຢູ່ ເພາະວ່າເຂົາຍັງປັບ ປຸງຢູ່ ຍັງບໍ່ສາມາດນຳໃຊ້ໄດ້ເຂົ້າໃຈວ່າເດືອນ 6 ເດືອນ 7 ມັນ ແຕກ ຄື ຍັງເອົາຊ່ຽວຊານປັບປຸງຢູ່ ທໍ່ດັນຂອງມັນ ທໍ່ໃຫ່ຽແລ້ວ ໂຮງປາວເວີ້".*

ເຂື່ອນໄຟຟ້າ ເຊກະໝານ3 ເຄີຍເລື່ອນເວລາມາແລ້ວ ຄັ້ງນຶ່ງຫລັງ ຈາກໄດ້ຮັບຜົນກະທົບຈາກພາຍຸເກສນາເມື່ອປີ 2009 ແລ້ວເລື່ອນ ກຳນົດເປີດມາເປັນປີ 2012. ການລ້າຊ້າໃນການ ກໍ່ສ້າງນີ້ເຮັດໃຫ້ ບໍຣິສັດ ຕ້ອງຈ່າຍເງິນຄ່າກໍ່ສ້າງເພີ້ມຂຶ້ນຕື່ມ 20 ລ້ານໂດລາ.

ໂຄງການເຂື່ອນໄຟຟ້າ ເຊກະໝານ3 ຕັ້ງຢູ່ເມືອງດັກຈຶງ ແຂວງເຊກອງ ມີກຳລັງຜລິດ 250 ເມກາວັດ ສ້າງໂດຍບໍຣິສັດ VLP ຂອງວຽດ ນາມ. ຫລາຍປີຜ່ານມານີ້ ຊາວບ້ານໃນແຂວງ ເຊກອງ ແລະອັຕະປື ໄດ້ຮັບຄວາມເດືອດຮ້ອນຫລາຍ ເພາະວ່າທາງບໍຣິສັດ ບໍ່ເອົາຫົວຊາ ນຳສິ່ງແວດລ້ອມພໍເທົ່າໃດ ປະປ່ອຍໃຫ້ນ້ຳຂີ້ຕົມ ໄຫລລົງນ້ຳເຊ. ເທົ່າປານນີ້ ປະຊາຊົນ ແຂວງ ເຊກອງ ແລະອັຕະປື ບໍ່ສາມາດໃຊ້ນ້ຳຕາມ ປົກກະຕິໄດ້. ຊາວບ້ານທີ່ໄດ້ຮັບຜົນກະທົບຈາກເຂື່ອນເຊກະໝານ3 ມີ ປະມານ 200 ຫລັງຄາເຮືອນ ຫລື 1200 ຄອບຄົວ.